# ຊີວິດດຽວໄດ້ປ່ຽນແປງໂລກທັງໂລກ.

## ພະອົງສາມາດປ່ຽນແປງຊີວິດພີ່ນ້ອງໄດ້ຄືກັນ!

ຄືນໜຶ່ງໃນຊ່ວງລະຫວ່າງສົງຄາມໂລກຄັ້ງທີ່ສອງ ເມືອງລີດຈ໌ (Liege) ຂອງ ປະເທດເບວຢ້ຽມໄດ້ຖືກເຄື່ອງບິນຂອງສັດຕູບິນຖິ້ມລະເບີດທັງຄືນ ເຮັດໃຫ້ເຮືອນຊານບ້ານຊ່ອງໄດ້ຮັບຄວາມເສຍຫາຍ ແລະເຮັດໃຫ້ປະຊາຊົນບາດເຈັບລົ້ມຕາຍເປັນຈຳນວນຫລາຍ. ຫລັງຈາກຄືນນັ້ນແລ້ວ ໜ່ວຍອາສາກູ້ໄພໄດ້ເຮັດວຽກຢ່າງໜັກສີ່ມື້ສີ່ຄືນເພື່ອຊ່ອຍເຫລືອຜູ້ບາດເຈັບແລະກູ້ເອົາຊາກຄົນຕາຍອອກມາຈາກຊາກຫັກພັງ. ໜຶ່ງໃນທີມງານອາສາກູ້ໄພເຫລົ່ານັ້ນກໍແມ່ນທີມງານຂອງອະນຸສາດສະໜາຈານ ແລະເມື່ອພວກເຂົາກຳລັງປະຕິບັດໜ້າທີ່ຢູ່ນັ້ນ ພວກເຂົາກໍໄດ້ຍິນສຽງຄາງອອກມາຄ່ອຍຈາກຊາກຫັກພັງ. ອະນຸສາດສະໜາຈານນັ້ນໄດ້ເວົ້າອອກມາວ່າ: "ຕະຫລອດທັງສີ່ມື້ສີ່ຄືນທີ່ຜ່ານມາພວກເຮົາເຮັດວຽກໜັກຊ່ອຍກູ້ເອົາທັງຄົນຕາຍແລະຄົນເປັນອອກມາ ພວກເຮົາຄິດວ່າຄົງບໍ່ມີຜູ້ມີຊີວິດຫລົງເຫລືອຢູ່ແລ້ວ ໃນທີ່ສຸດພວກເຮົາໄດ້ຍິນສຽງຄາງຄ່ອຍໆຂອງເດັກນ້ອຍຜູ້ຊາຍ ສຽງຄາງນັ້ນເຮັດໃຫ້ພວກເຮົາຮູ້ວ່າ ຢ່າງນ້ອຍກໍຍັງມີຜູ້ໜຶ່ງທີ່ຍັງມີຊີວິດ ແລະພວກເຮົາກໍໄດ້ຊ່ອຍເຫລືອເດັກນ້ອຍນັ້ນອອກມາ ເດັກນ້ອຍນັ້ນຍັງມີສະຕິຢູ່ ເຖິງແມ້ວ່າບໍ່ໄດ້ກິນເຂົ້າບໍ່ໄດ້ກິນນ້ຳເປັນເວລາຫລາຍມື້ແລ້ວກໍຕາມ"

ເດັກນ້ອຍນີ້ລອດຊີວິດມາໄດ້ແນວໃດ? ມັນເປັນປະຕິຫານແທ້ ເດັກນ້ອຍຜູ້ນີ້ໄດ້ນອນຢູ່ກ້ອງຮ່າງ-ກາຍທີ່ໄຮ້ວິນຍານຂອງແມ່ລາວ ດ້ວຍຄວາມຮັກ ແມ່ຂອງລາວໄດ້ໃຊ້ໂຕລາວເອງເປັນເກາະປ້ອງກັນບໍ່ໃຫ້ຫີນມາທັບລູກເມື່ອເວລາຕຶກທະລົ່ມ ຫີນນັ້ນໄດ້ທັບແມ່ລາວເຕັມໆ ແຕ່ລູກນ້ອຍນັ້ນບໍ່ເປັນຫຍັງ.

ຍິງເບວຢ້ຽມຄົນນັ້ນໄດ້ສະຫລະຊີວິດຂອງລາວເພື່ອຊ່ອຍລູກຜູ້ທີ່ລາວຮັກສຸດຫົວໃຈ

ເພື່ອນທີ່ຮັກ, ພະເຈົ້າໄດ້ເສຍສະຫລະພະບຸດຂອງພະອົງມາຊ່ອຍບໍ່ພຽງແຕ່ຄົນທີ່ຮັກພະອົງ ແຕ່ລວມທັງສັດຕູຂອງພະອົງຜູ້ທີ່ຊັງພະອົງ. ພະຄຳພີໄດ້ເວົ້າກ່ຽວກັບການເສຍສະຫລະຂອງພະເຈົ້າວ່າ

(ເອຊາຢາ 53:3-8)
"ເຂົາໄດ້ຮັບຄວາມລຳບາກແລະທົນຕໍ່ຄວາມເຈັບປວດ ບໍ່ມີໃຜຈະຫລຽວແລເຂົາ...

ແຕ່ເຂົາໄດ້ທົນແບກເອົາຄວາມລຳບາກຂອງເຮົາ ຄືຄວາມເຈັບປວດທີ່ເຮົາແບກຢູ່ນັ້ນ ... ແຕ່ເຂົາຖືກບາດເຈັບຍ້ອນບາບຂອງພວກເຮົາທັງຫລາຍ ເຂົາຖືກຕີຍ້ອນພວກເຮົາທຳຊົ່ວ ການລົງໂທດທີ່ເຂົາໄດ້ຮັບນັ້ນທຳໃຫ້ພວກເຮົາເປັນອິສຣະສົມບູນ ທີ່ເຂົາຖືກຕີນັ້ນກໍເພື່ອໃຫ້ເຮົາຫາຍດີ ເຮົາທັງຫມົດເປັນເຫມືອນແກະທີ່ສູນເສັຽແລ້ວ. ເຂົາຖືກຫມິ່ນປມາດຢ່າງເຈັບແສບ ແຕ່ກໍມີຄວາມສຸ-ພາບອ່ອນຫວານ ເຂົາບໍ່ເວົ້າຈາຫຍັງເລີຍເຫມືອນລູກແກະທີ່ຖືກນຳໄປຂ້າ"

ຈາກຂໍ້ພະຄຳຂ້າງເທິງພວກເຮົາຮູ້ວ່າແກະນັ້ນໄດ້ໝາຍເຖິງພະເຍຊູ. ຫລາຍເທື່ອໃນພະຄຳພີພະອົງໄດ້ຖືກຮ້ອງວ່າ "ແກະ" ຄຳລາຊາສັບຂອງແກະແມ່ນພະເມສານ້ອຍ ໃນພະນິມິດ 13:8 ພະອົງໄດ້ຖືກຮ້ອງວ່າເປັນ "ພະເສມານ້ອຍ" ຫລືຈະເວົ້າຕາມພາສາທຳມະດາກໍແມ່ນ "ແກະ"

(ພະນິມິດ 13:8) ".. ຄື...ທະບຽນແຫ່ງຊີວິດ ຕັ້ງແຕ່ຊົງສ້າງໂລກຄືທະບຽນຂອງພຣະເມສານ້ອຍທີ່ຊົງຖືກຂ້າເສຍນັ້ນ."

(ພະນິມິດ 5:8) "...ພວກອາວຸໂສຊາວສີ່ທ່ານນັ້ນ ກໍຂາບລົງຖວາຍບັງຄົມພຣະເມສານ້ອຍ ...(ທູນວ່າ)" (ພະນິມິດ 5:12) "ພຣະເມສານ້ອຍຜູ້ຖືກຂ້າແລ້ວນັ້ນ..."

ໃຫ້ເຮົາມາເບິ່ງຊີວິດຂອງອັກຄະສາວົກໂຢຮັນ: ລາວໄດ້ເລົ່າເຫດການທີ່ເກີດຂຶ້ນກັບລາວ ເຊິ່ງໄດ້ຖືກບັນທຶກໄວ້ໃນໜັງສືພະນິມິດບົດທີ 5 ພະເຈົ້າໄດ້ປະທານນິມິດໃຫ້ລາວ:

(ພະນິມິດ 4:1) "ຂ້າພະເຈົ້າໄດ້ເບິ່ງ ແລະດັ່ງນີ້ ມີປະຕູໄຂຢູ່ໃນສວັນ ແລະພຣະສຸຣະສຽງທຳອິດທີ່ຂ້າພະເຈົ້າໄດ້ຍິນ ຊົງກ່າວກັບຂ້າພະເຈົ້າເຫມືອນດັ່ງສຽງແກວ່າ, 'ຈົ່ງຂຶ້ນມາທີ່ນີ້ ແລະເຮົາຈະສະ-ແດງໃຫ້ເຈົ້າເຫັນເຫດການທີ່ຕ້ອງເກີດຂຶ້ນໃນພາຍຫນ້າ'"

ຫລັງຈານນັ້ນໂຢຮັນໄດ້ເຫັນບັນລັງເຊິ່ງພະບິດາເຈົ້າກຳລັງນັ່ງຢູ່ ເຊິ່ງອ້ອມຮອບດ້ວຍທູດສະຫວັນຫລາຍອົງອ້ອມ ແລະບັນລັງອີກ 24 ທີ່ນັ່ງເຊິ່ງຜູ້ທີ່ກຳລັງນັ່ງຢູ່ນັ້ນໄດ້ສວມມົງກຸດທອງຄຳ ແລະສັດມີປີກອີກສີ່ໂຕ

(ພະນິມິດ 5:1,2) "ໃນພຣະຫັດເບື້ອງຂວາຂອງພຣະອົງ ຜູ້ຊົງປະທັບເທິງພຣະຣາຊບັນລັງນັ້ນຂ້າພະເຈົ້າໄດ້ເຫັນຫນັງສືມ້ວນນຶ່ງຂຽນໄວ້ທັງຂ້າງໃນແລະຂ້າງນອກ ຕີຕາປະທັບໄວ້ເຈັດດວງ

ແລະຂ້າພະເຈົ້າໄດ້ເຫັນເທວະດາຜູ້ມີຣິດຕົນນຶ່ງປະກາດດ້ວຍສຽງອັນດັງວ່າ, “ຜູ້ໃດຫນໍເປັນຜູ້ສົມ-ຄວນຈະແກະຕາປະທັບແລະມາຍມ້ວນຫນັງສືມ້ວນນີ້ອອກ”

ໜັງສືມ້ວນນັ້ນມີຂ່າວສານທີ່ສຳຄັນທີ່ສຸດ ແຕ່ບໍ່ມີໃຜສາມາດເປີດໜັງສືມ້ວນໄດ້. ໂຢຮັນມີຄວາມຜິດຫວັງຫລາຍ!

(ພະນິມິດ 5:3,4) ທີ່ຈິງແລ້ວ ໂຢນຮັນໄດ້ເວົ້າວ່າ “ບໍ່ມີຜູ້ໃດໃນສວັນ ເທິງແຜ່ນດິນໂລກ ຫລືໃຕ້ແຜ່ນດິນກໍດີ ທີ່ສາມາດມາຍຫນັງສືມ້ວນນັ້ນອອກ ຫລືເບິ່ງຫນັງສືນັ້ນໄດ້ ຂ້າພະເຈົ້າໄດ້ຮ້ອງໄຫ້ຮ່ຳໄຮຫລາຍ ເພາະບໍ່ມີຜູ້ໃດສົມຄວນຈະມາຍຫນັງສືນັ້ນອອກຫລືເບິ່ງໄດ້”

(ພະນິມິດ 5:5-7) ມີຜູ້ໜຶ່ງໃນພວກອາວຸໂສນັ້ນໄດ້ບອກໃຫ້ໂຢຮັນຢຸດຮ້ອງໄຫ້ ເພາະວ່າຈະມີຄົນໜຶ່ງທີ່ສາມາດເປີດແລະອ່ານໜັງສືມ້ວນນັ້ນໄດ້. ຜູ້ອາວຸໂສນີ້ໄດ້ບອກໂຢຮັນວ່າ “ສິງແຫ່ງຕະກູນຢູດາ ຫນໍ່ເຊື້ອຂອງດາວິດໄດ້ຊັຍຊະນະແລ້ວ ຈຶ່ງສາມາດແກະຕາທັງເຈັດແລະມາຍຫນັງສືນັ້ນອອກໄດ້ ໃນລະຫວ່າງພຣະຣາຊບັນລັງກັບສັດທັງສີ່ ແລະໃນຖ້າມກາງພວກອາວຸໂສເຫລົ່ານັ້ນ ຂ້າພະ-ເຈົ້າໄດ້ເຫັນພຣະເມສານ້ອຍປະທັບຢືນຢູ່ເຫມືອນຖືກຂ້າແລ້ວ ແລະພຣະເມສານ້ອຍນັ້ນໄດ້ເຂົ້າມາຮັບຫນັງສືມ້ວນນັ້ນຈາກພຣະຫັດເບື້ອງຂວາຂອງພຣະອົງ ຜູ້ຊົງປະທັບເທິງຣາຊບັນລັງນັ້ນ.”

(ພະນິມິດ 5:8-10) “ເມື່ອພຣະອົງຊົງຮັບຫນັງສືນັ້ນແລ້ວ ສັດທັງສີ່ກັບພວກອາວຸໂສຊາວສີ່ທ່ານນັ້ນ ກໍຂາບລົງຖວາຍບັງຄົມພຣະເມສານ້ອຍ ... ”

ເຂົາໄດ້ຮ້ອງເພງໃຫມ່ວ່າ, “ພຣະອົງຊົງເປັນຜູ້ສົມຄວນຈະຊົງຮັບມ້ວນຫນັງສື ແລະແກະຕາມ້ວນຫນັງສືອອກເພາະວ່າພຣະອົງຊົງຖືກຂ້າແລ້ວ ແລະດ້ວຍພຣະໂລຫິດຂອງພຣະອົງນັ້ນ ພຣະອົງໄດ້ຊົງໄຖ່ມະນຸດທຸກເຜົ່າທຸກພາສາທຸກຊາດແລະທຸກປະເທດສຳລັບພຣະເຈົ້າ ພຣະອົງໄດ້ຊົງບັນດານໃຫ້ເຂົາເປັນຣາຊອານາຈັກ ແລະເປັນປະໂຣຫິດທີ່ປະຕິບັດພຣະເຈົ້າຂອງພວກເຮົາ ແລະເຂົາເຫລົ່ານັ້ນຈະໄດ້ປົກຄອງແຜ່ນດິນໂລກ”



ພະເຍຊູຄືພະເມສານ້ອຍຜູ້ໄດ້ຊົງໄຖ່ເຮົາທຸກຄົນ, ແລະພະອົງໄດ້ຊົງແຕ່ງຕັ້ງເຮົາທຸກຄົນເປັນຜູ້ປົກ-ຄອງຮ່ວມກັບພະບິດາ. ໃຫ້ພວກເຮົາຍ້ອນກັບໄປທີ່ສວນເອເດັນເພື່ອທີ່ວ່າພວກເຮົາຈະໄດ້ເຂົ້າໃຈຂຶ້ນຕື່ມເຖິງຄຳທີ່ວ່າພະອົງ(ພະເມສາ)ຖືກຂ້າທີ່ໜັງສືພະນິມິດໄດ້ກ່າວ. ເມື່ອອາດາມແລະເອວາເຮັດບາບ ຄວາມບາບໄດ້ແຍກເຂົາອອກຈາກພະເຈົ້າ ແລະພວກເຂົາກໍບໍ່ສາອີກກິນໝາກໄມ້ຈາກຕົ້ນໄມ້

ແຫ່ງຊີວິດໄດ້ອີກຕໍ່ໄປ. ພະເຈົ້າໄດ້ຂັບໄລ່ອາດາມແລະເອວາຈາກສວນເອເດັນອັນເຄີຍເປັນບ້ານຂອງພວກເຂົາ ເພາະສະນັ້ນພວກເຂົາບໍ່ສາມາດກິນໝາກໄມ້ຈາກຕົ້ນໄມ້ແຫ່ງຊີວິດແລະບໍ່ສາມາດມີຊີວິດອັນຕະຫລອດໄປ. ເມື່ອບໍ່ໄດ້ກິນໝາກໄມ້ຈາກຕົ້ນໄມ້ແຫ່ງຊີວິດ ສຸຂະພາບຂອງພວກເຂົາກໍເຊື່ອມລົງຊ້າໆແລະກໍຕາຍໄປໃນທີ່ສຸດ.

(ປະຖົມມະການ 3:24) “ເມື່ອພຣະເຈົ້າໄດ້ຂັບໄລ່ມະນຸດອອກຈາກສວນແລ້ວ ພຣະອົງໄດ້ຊົງແຕ່ງ-ຕັ້ງເທວະດາ ເຊຣູບິມ ທາງທິດຕາເວັນອອກຂອງສວນ ແລະດາບທີ່ມີແສງໄຟແກວ່ງໄປທົ່ວທຸກທິດ ເພື່ອປ້ອງກັນບໍ່ໃຫ້ຜູ້ນຶ່ງຜູ້ໃດເຂົ້າໄປໃກ້ກົກໄມ້ທີ່ໃຫ້ມີຊີວິດຕລອດໄປເປັນນິດນັ້ນ”

ກ່ອນທີ່ພະເຈົ້າຂັບໄລ່ອາດາມແລະເອວາອອກຈາກສວນເອເດັນນັ້ນ, ພະເຈົ້າໄດ້ບອກພວກເຂົາເຖິງແຜນການຊ່ອຍກູ້ເອົາພວກເຂົາຈາກຄວາມບາບ. ພະເຈົ້າໄດ້ປະກາດຕັດສິນຄວາມຊົ່ວ(ມານຫລືງູໃນດຶກດຳບັນ)

(ປະຖົມມະການ 3:15) ພະເຈົ້າໄດ້ກ່າວວ່າ “ເຈົ້າກັບແມ່ຍິງຈະຕ້ອງກຽດຊັງກັນ ມະນຸດແລະງູຈະຕ້ອງເປັນສັດຕຣູກັນ ມະນຸດຈະພຍາຍາມຢຽບຫົວເຈົ້າໃຫ້ແຕກ ແລະເຈົ້າກໍຈະພຍາຍາມຕອດສົ້ນໜ່ອງຂອງພວກເຂົາ”

“ຢຽບ” ຄຳນີ້ໃນພະສາຮັບຮູມີຄວາມໝາຍວ່າ “ບົດລະອຽດ” ແນ່ນອນຄຳວ່າ “ບົດລະອຽດ” ບອກເຖິງການກະທຳທີ່ແຮງກວ່າ “ຢຽບ” ຖ້າເຮົາບົດຫົວໃຜໃຫ້ລະອຽດ ກໍເທົ່າກັບເຮົາຂ້າຜູ້ນັ້ນ! ສົງຄາມລະຫວ່າງພະຄຣິດແລະຊາຕານແມ່ນມີແທ້ແລະພະຄຣິດຄືຜູ້ຊະນະ!

ພະເຈົ້າໄດ້ກະທຳອັນໃດອັນໜຶ່ງເພື່ອບອກໃຫ້ພໍ່ແມ່ເຮົາຄູ່ທຳອິດຮູ້ເຖິງແຜນການຊ່ອຍໃຫ້ພົ້ນແລະເຮັດໃຫ້ເຂົາຄືນກັບສູ່ຄອບຄົວຂອງພະເຈົ້າ. ພະອົງໄດ້ບອກໃຫ້ເຂົາຮູ້ເຖິງກົດແຫ່ງການສະລະຊີບຂອງລູກແກະ(ພະເຍຊູ) ແລະພວກເຂົາຈະຕ້ອງມີຄວາມເຊື່ອໃນການສະລະຊີບຂອງລູກແກະນັ້ນເພື່ອພວກເຂົາຈະໄດ້ມີຊີວິດນິລັນ. ພະອົງບໍ່ໄດ້ບອກແຈ້ງວ່າ ເມື່ອໃດທີ່ພະອົງໄດ້ສ້າງກົດແຫ່ງການສະລະຊີບນີ້ຂຶ້ນມາ, ແຕ່ພວກເຮົາຮູ້ວ່າ ອາດາມແລະເອວາຮູ້ສຶກໂຕວ່າພວກເຂົາເປືອຍກາຍຢູ່, ພະເຈົ້າໄດ້ສ້າງເສື້ອຜ້າໜັງໃຫ້ເຂົາໃສ່. ໃນປະຖົມມະການບົດທີ 4 ພວກເຮົາພົບວ່າກາອິນແລະອາເບນໄດ້ນຳຂອງບູຊາໄປໃຫ້ພະເຈົ້າ.

(ປະຖົມມະການ 4:4) “ສ່ວນອາເບນກໍເອົາສັດ(ແກະ)ເກີດແຕ່ທ້ອງທີ່ຕຸ້ຍພີດີງາມໃນຝູງສັດມາຂ້າ ແລ້ວເອົາເນື້ອສ່ວນທີ່ດີໆມາຖວາຍແກ່ພຣະຜູ້ເປັນເຈົ້າ ພຣະອົງຊົງພໍພຣະທັຍໃນການກະທຳຂອງອາເບນ” ຂໍ້ນີ້ໃນພະຄຳພີພາສາອັງກິດ ເຂົາໄດ້ໃຊ້ຄຳວ່າ “ແກະ” ແທນຄຳວ່າ “ສັດ”

(ປະຖົມມະການ 4:5) ພະຄຳພີໄດ້ບອກວ່າ “ສ່ວນການຖວາຍຂອງກາອິນນັ້ນບໍ່ເປັນທີ່ຊອບພຣະທັຍຂອງພຣະຜູ້ເປັນເຈົ້າເລີຍ ກາອິນຈຶ່ງຄຽດແຄ້ນ ແລະເຕັມໄປດ້ວຍຄວາມບໍ່ພໍໃຈ” ອາເບນໄດ້ເອົາແກະເຊິ່ງເປັນສັນຍາລັກຂອງການສິ້ນພະຊົນຂອງລູກແກະຂອງພະເຈົ້າເພື່ອຄວາມບາບຂອງພວກເຮົາ, ແຕ່ກາອິນໄດ້ເອົາຂອງຖະຫວາຍທີ່ບໍ່ໄດ້ສະແດງໃຫ້ເຫັນເຖິງຄວາມໃນການຕາຍຂອງລູກແກະເຊິ່ງໝາຍເຖິງການຕາຍແທນລາວຂອງແກະ.

ເຮັບເຣີ ຫລື ຮີບຣູ 9:22 ໄດ້ກ່າວວ່າ “... ແລະຖ້າບໍ່ມີເລືອດໄຫລອອກແລ້ວການໃຫ້ອະພັຍກໍບໍ່ມີ”

ເມື່ອພະເຈົ້າໄດ້ນຳເອົາປະຊາຊົນອິດສະລາເອນອອກຈາກການເປັນທາດທີ່ເອຢິບ, ພະອົງໄດ້ສອນບົດຮຽນຕ່າງໆໃຫ້ພວກເຂົາໂດຍທາງພິທີກຳຕ່າງໆ ພິທີກຳເຫລົ່ານີ້ແມ່ນກ່ຽວເນື່ອງກັບພະວິຫານຫລືຫໍເຕັນສັກສິດທີ່ພະເຈົ້າໄດ້ສັ່ງໃຫ້ໂມເຊສ້າງຕອນທີ່ພວກເຂົາໃນຖິ່ນກັນດານ. ຫໍເຕັນສັກສິດເປັນທີ່ຈຳລອງຂອງຫໍເຕັນອັນແທ້ຈິງໃນສະຫວັນ. ໜຶ່ງໃນພິທີກຳທີ່ໄດ້ມອບໃຫ້ກັບພວກຢິວກໍຄືພິທີປັດສະຄາເຊິ່ງໄດ້ສອນແຈ້ງໃຫ້ພວກເຂົາເຫັນເຖິງການຕາຍຂອງລູກແກະ.

ໃນວັນທີ 14 ຂອງເດືອນທຳອິດ ປະຊາຊົນເຫລົ່ານັ້ນໄດ້ຖືກສອນໃຫ້ຮູ້ເຖິງການຂ້າແກະແລະເອົາເລືອດແກະໄປທາຂອບປະຕູເຮືອນ ເພື່ອເປັນສັນຍາລັກໃຫ້ພະເຈົ້າເຫັນວ່າພວກເຂົາໄດ້ຖືກຄຸ້ມຄອງດ້ວຍເລືອດຂອງແກະ ໃນຄືນນັ້ນທູດສັງຫານໄດ້ເຂົ້າໄປໃນເຮືອນຂອງປະຊາຊົນເອຢິບ. ເຮືອນໃດທີ່ມີເລືອດແກະທາຢູ່ຂອບປະຕູ ທູດສັງຫານນັ້ນໄດ້ເວັ້ນໄປ. ເພາະສະນັ້ນພິທີນີ້ທີ່ມອບໃຫ້ກັບຄົນຢິວຈຶ່ງເອີ້ນວ່າ “ປັດສະຄາ” ໃນພາສາອັງກິດຄຳນີ້ມີຄວາມໝາຍວ່າ “ຜ່ານໄປຫລືລະເວັ້ນ”

ພິທີນີ້ເປັນສິ່ງຢ້ຳເຕືອນໃຫ້ຮູ້ວ່າມີພຽງແຕ່ເລືອດຂອງແກະເທົ່ານັ້ນທີ່ສາມາດເຮັດໃຫ້ເຮົາເປັນອິດສະຫລະຈາກຄວາມພິນາດທີ່ກຳລັງລໍລອຍເຮົາຢູ່ທຸກມື້ນີ້. ພິທີຕ່າງໆແລະການຖະຫວາຍສັດເຫລົ່ານີ້ບໍ່ສາມາດລົບລ້າງຄວາມບາບຂອງມະນຸດໄດ້. ແຕ່ວ່າຄວາມເຊື່ອໃນການຕາຍຂອງລູກແກະທີ່ຈະມາຕາຍນັ້ນສາມາດຊ່ອຍພວກເຂົາພົ້ນຈາກຄວາມບາບ ຫລັກຖານທີ່ສະແດງໃຫ້ເຫັນເຖິງຄວາມເຊື່ອຂອງພວກເຂົາແມ່ນລູກແກະທີ່ພວກເຂົາຂ້າບູຊາໃນພິທີຖະຫວາຍຕ່າງໆຂອງເຂົາ

(ເຮັບເຣີ 9:26) ໂປໂລໄດ້ຂຽນວ່າ "..ພຣະອົງໄດ້ຊົງປາກົດເພື່ອຖວາຍພຣະອົງເອງເປັນເຄື່ອງບູ-ຊາພຽງເທື່ອດຽວ ເພື່ອລົບລ້າງບາບເປັນການສິ້ນສຸດ..."

(ເຮັບເຣີ 10:4) "ເຫດວ່າເລືອດງົວເຖິກແລະເລືອດແບ້ບໍ່ສາມາດຊໍາຣະບາບໃຫ້ຫມົດສິ້ນໄປໄດ້ຈັກເທື່ອ"

ເມື່ອພະເຍຊູສະເດັດລົງມາໃນໂລກນີ້ແລະສະເດັດໄປຟັງຄໍາປະກາດກ່ຽວກັບພະຜູ້ຊ່ອຍໃຫ້ລອດຂອງໂຢຮັນຜູ້ໃຫ້ບັບຕິສະມາ,

ໂຢຮັນໄດ້ຊີ້ມາທີ່ພະເຍຊູແລ້ວກ່າວວ່າ (ໂຢຮັນ 1:29) "ເບິ່ງແມ່, ພຣະເມສານ້ອຍຂອງພຣະເຈົ້າຜູ້ຊົງຮັບເອົາຄວາມຜິດບາບຂອງມະນຸສໂລກໄປເສັຽ"

ພິທີຕ່າງໆໃນສະໄໝເກົ່າແມ່ນຊີ້ມາເຖິງການກັບມາຂອງພະຜູ້ຊ່ອຍໃຫ້ລອດ-ພະເມສາຂອງພະເຈົ້າຄໍາພະຍາກອນຫລາຍກວ່າ 300 ເລື່ອງໄດ້ກາຍເປັນຈິງໃນສະໄໝຂອງພະເຍຊູ! ແຕ່ວ່າພວກປະໂຣຫິດ, ຟາຣີສີ, ພວກສະໝຽນແລະອີກຫລາຍໆຄົນຄິດບໍ່ອອກວ່າຜູ້ນັ້ນແມ່ນພະເຍຊູ.

(ໂຢຮັນ 1:11) ພະຄໍາພີໄດ້ກ່າວວ່າ "ພຣະອົງໄດ້ສະເດັດມາຍັງບ້ານເມືອງຂອງພຣະອົງ ແລະຊາວບ້ານຊາວເມືອງຂອງພຣະອົງບໍ່ໄດ້ຕ້ອນຮັບພຣະອົງ"

ທຸກຄົນໃນສະໄໝນັ້ນຮູ້ຈັກພະຄໍາພີເກົ່າດີ ພວກເຂົາອ່ານໜັງສືມ້ວນແຫ່ງຄໍາພະຍາກອນທຸກວັນສະ-ບາໂຕໃນໂບດ! ແລ້ວເປັນໄປໄດ້ແນວໃດທີ່ພວກເຂົາບໍ່ຮູ້ວ່າເຫດການໃນຄໍາພະຍາກອນເຫລົ່ານີ້ເປັນຈິງຕອນໃດ? ໃຫ້ພວກເຮົາມາເບິ່ງຄໍາພະຍາກອນສອງສາມເລື່ອງກ່ຽວກັບພະເຍຊູຜູ້ຊ່ອຍໃຫ້ພົ້ນທີ່ຖືກເບິ່ງຂ້າມໄປ! ຄໍາພະຍາກອນໜຶ່ງໃນໜັງສືດານິເອນໄດ້ບອກເຖິງເວລາທີ່ພະຜູ້ຊ່ອຍໃຫ້ລອດຈະມາແລະແມ່ນຫຍັງຈະເກີດຂຶ້ນເມື່ອພະອົງມາ. ເລື່ອງທຸກຢ່າງໄດ້ເກີດຂຶ້ນຈິງຕາມຄໍາພະຍາ-ກອນທໍານາຍທຸກຢ່າງ!

ດານິເອນໄດ້ສຶກສາໜັງສືເຢເຣມີຢາ ແລະລາວກໍພົບວ່າເຢເຣມີຢາໄດ້ທໍານາຍວ່າຄົນຢິວຈະຕົກເປັນທາດ 70 ປີ ແລະຫລັງຈາກນັ້ນພວກເຂົາກໍຈະຖືກປ່ອຍເປັນອິດສະຫລະແລະກັບຄືນບ້ານໄດ້. ດານິເອນຕື່ນເຕັ້ນແລະໄດ້ອະທິຖານຂໍໃຫ້ພະເຈົ້າເຮັດຕາມທີ່ພະອົງໄດ້ສັນຍາໄວ້ ນັ້ນຄື ປ່ອຍໃຫ້ຄົນຢິວກັບຄືນເຢຣູຊາເລັມ. ດານິເອນໄດ້ສາລະພາບບາບຂອງລາວແລະຂອງຄົນຢິວແລະຂໍໃຫ້ພະເຈົ້າ

ປ່ອຍໃຫ້ເຂົາເປັນອິດສະຫລະ. ໃນຂະນະທີ່ດານີເອນອະທິຖານຮ້ອງຂໍພະເຈົ້າ ທູດສະຫວັນຄັບຣີເອນໄດ້ມາປາກົດແກ່ລາວ

(ດານີເອນ 9:22,23) "ທ່ານໄດ້ອະທິບາຍວ່າ, 'ດານີເອນເອີຍ, ເຮົາໄດ້ມາທີ່ນີ້ເພື່ອຊ່ອຍໃຫ້ເຈົ້າເຂົ້າໃຈຄໍາເວົ້າຂອງຜູ້ປະກາດພຣະທັມ ເພາະວ່າພຣະເຈົ້າຊົງຮັກເຈົ້າ ບັດນີ້ເຮົາຈະອະທິບາຍນິມິດນັ້ນ ຈົ່ງຕັ້ງໃຈຟັງໃຫ້ດີ'" ທູດສະຫວັນຄັບຣີເອນໄດ້ບອກດານີເອນວ່າປະຊາຊົນຂອງເຈົ້າຈະຕ້ອງເປັນທາດ 70 ອາທິດ.
ເປັນຫຍັງ?

(ດານີເອນ 9:24) "ມີເຈັດສິບສັປດາແຫ່ງປີກໍານົດໄວ້ສໍາລັບຊົນຊາດແລະນະຄອນອັນສັກສິດຂອງທ່ານ ເພື່ອໃຫ້ສິ້ນສຸດການທໍຣະຍົດ ໃຫ້ບາບຈົບສິ້ນ ແລະໃຫ້ລົບມົນທິນ ເພື່ອນໍາຄວາມຍຸດຕິທັມຕລອດໄປເປັນນິດເຂົ້າມາ ເພື່ອວ່ານິມິດແລະຄໍາເວົ້າຂອງຜູ້ປະກາດພຣະທັມຈະໄດ້ສໍາເຣັດເປັນຈິງ ແລະເພື່ອພຣະວິຫານອັນສັກສິດຈະໄດ້ເປັນທີ່ຖວາຍແດ່ພຣະເຈົ້າ"

ໜຶ່ງວັນໃນຄໍາພະຍາກອນຂອງພະຄໍາພີເທົ່າກັບໜຶ່ງປີ!

(ເອເຊກຽນ 4:6) ໃນພະຄໍາຈົດບັນຊີ 14:34 ແລະເອເຊກຽນ 4:6
"ເຮົາກໍານົດໃຫ້ເຈົ້າສີ່ສິບວັນ **ວັນແທນປີ**"

(ດານີເອນ 9:25,26) ທູດສະຫວັນຄັບຣີເອນໄດ້ກ່າວຕໍ່ໄປກ່ຽວກັບຄໍາພະຍາກອນຂອງພະອົງວ່າ: "ຈົ່ງສັງເກດແລະເຂົ້າໃຈດັ່ງນີ້ ນັບຕັ້ງແຕ່ອອກຄໍາສັ່ງໃຫ້ສ້າງນະຄອນເຢຣູຊາເລັມຂຶ້ນໃຫມ່ ໄປຈົນເຖິງພວກຜູ້ນໍາທີ່ພຣະເຈົ້າຊົງເລືອກໄດ້ມາຄອບຄອງຈະເປັນເວລາເຈັດອາທິດ...(ແລະ) ..ຫົກສິບສອງສັປຕະ...) ຂໍ້ນີ້ໃນພະຄໍາພີພາສາອັງກິດເຂົາໄດ້ໃຊ້ຄໍາ "ພະຜູ້ຊ່ອຍໃຫ້ລອດ" ແທນຄໍາ "ພວກຜູ້ນໍາທີ່ພະເຈົ້າຊົງເລືອກ"

ຄໍາພະຍາກອນໄດ້ບອກເຖິງເວລາທີ່ພະຄຣິດຈະສະເດັດມາແລະການຮັບສິນຂອງພະອົງ ຄໍາພະຍາກອນນີ້ເປັນຫລັກຖານບົ່ງບອກວ່າພະຄຣິດໄດ້ຖືກສົ່ງມາຈາກພະເຈົ້າແລະອົງເປັນພະເມຊີຢາທີ່ແທ້ຈິງ. ຕໍ່ໄປນີ້ເຮົາຈະມາຄໍານວນໜ້ອຍໜຶ່ງ

70 ອາທິດໃນຄໍາພະຍາກອນເທົ່າກັບ 490 ປີ

457 ປີກ່ອນ ຄ.ສ. ກະສັດອາຕາເຊີຊີສ (Artaxerxes) ໄດ້ອອກຄຳສັ່ງໃຫ້ມີການສ້າງກຸງເຢຣູຊາເລັມຄືນໃໝ່.
79-80
ຕື່ມ 483 ປີ (ເທົ່າກັບ 69 ອາທິດ) ໃສ່ ປີທີ່ກະສັດອາຕາເຊີຊີສອອກຄຳສັ່ງ ເຮົາກໍຈະໄດ້ ປີ ຄ.ສ. 27,

ເຊິ່ງເປັນປີທີ່ພະຄຣິດໄດ້ມາຫາໂຢຮັນ ບັດຕະສະໂຕເພື່ອຮັບສິນທີ່ແມ່ນ້ຳຈໍແດນ.

ຄຳວ່າ "ພະເມຊີຢາ" ໃນພະສາຮີບຣູແລະ "ພະຄຣິດ" ໃນພາສາກຣີກທັງສອງຄຳນີ້ມີຄວາມໝາ-ຍວ່າ "ຜູ້ທີ່ຖືກເຈີມ." ຕອນໃດທີ່ພະຄຣິດໄດ້ຖືກເຈີມ?
ພະຄຳລູກາໄດ້ບອກເຖິງປີ!

(ລູກາ 3:1,21,22) "ເມື່ອປີທີ່ສິບຫ້າໃນຣັຊການກາຊາຕີເບຣີໂອ ...ເມື່ອຄົນທັງປວງໄດ້ຮັບບັບຕິສະມາ ແລະພຣະເຢຊູກໍຊົງຮັບບັບຕິສະມາເຫມືອນກັນ ຂນະເມື່ອພຣະອົງຊົງໄຫວ້ວອນຢູ່ ທ້ອງຟ້າກໍໄຂອອກ ແລະພຣະວິນຍານບໍຣິສຸດຊົງຮູບເຫມືອນນົກເຂົາໄດ້ສະເດັດລົງມາສະຖິດຢູ່ເທິງພຣະອົງ ແລະມີພຣະສຸຣະສຽງອອກມາຈາກຟ້າສວັນວ່າ, 'ທ່ານເອີຍ, ທ່ານເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈຫລາຍໃນທ່ານ'"

ພະເຢຊູໄດ້ຖືກເຈີມໂດຍພະວິນຍານບໍລິສຸດເມື່ອພະອົງຮັບສິນທີ່ແມ່ນ້ຳຈໍແດນ. ໂປໂລໄດ້ກ່າວວ່າ (ກິດຈະການ 10:38) "...ພຣະເຈົ້າໄດ້ຊົງຫົດສົງ(ເຈີມ)ເຢຊູໄທນາຊາເຣັດດ້ວຍພຣະວິນຍານບໍຣິສຸດ...)
89
ໃຫ້ເຮົາມາຄຳນວນຄະນິດອີກ ກາຊາຕີເບຣີໂອ (Tiberius Caesar) ໄດ້ເລີ່ມຄອງລາດໃນປີ ຄ.ສ. ລູກາໄດ້ກ່າວວ່າພະເຢຊູໄດ້ຮັບສິນ 15 ປີຫລັງຈາກກາຊາຕີເບຣີໂອຂຶ້ນຄອງລາດ ນັ້ນກໍແມ່ນປີ ຄ.ສ. 27 ນີ້ກໍແມ່ນຖືກຕ້ອງຕາມຄຳພະຍາກອນ 483 ປີແລະກໍໄດ້ພິສູດວ່າພະເຢຊູຄືຜູ້ທີ່ພະອົງອ້າງວ່າພະອົງເປັນ!

ສ່ວນສຸດທ້າຍຂອງຄຳພະຍາກອນໄດ້ກ່າວວ່າພະຜູ້ຊ່ອຍໃຫ້ລອດຈະສິນພະຊົນໃນກາງອາທິດທີ 70.

(ດານີເອນ 9:27) "ແລະພະອົງຈະເຮັດໃຫ້ພະສັນຍາຕ່າງເປັນຈິງໃນໜຶ່ງອາທິດ (ສັປຕະ) ແລະໃນກາງອາທິດພະອົງຈະໃຫ້ພິທີເສັ້ນໄຫວ້ຖະຫວາຍບູຊາຕ່າງໆໝົດໄປ." (ແປມາຈາກພະຄຳພີພາ-ສາອັງກິດ ຈາກ ດານີເອນ 9:27)

ຄຳພະຍາກອນໄດ້ເປັນຈິງທຸກຢ່າງ. ພະເຍຊູໄດ້ສິ້ນພະຊົນທີ່ໄມ້ກາງແຂນໃນວັນທີສິບສີ່ຂອງເດືອນທຳອິດຂອງຄົນຢິວໃນປີ ຄ.ສ. 31

(ມາຣະໂກ 15:38) ມາຣະໂກໄດ້ຂຽນບັນທຶກໄວ້ເຖິງເຫດການທີ່ເກີດຂຶ້ນກັບພະວິຫານໃນຂະນະທີ່ພະອົງສິ້ນພະຊົນວ່າ: "ຂນະນັ້ນຜ້າກັ້ງໃນພຣະວິຫານກໍຖືກຊົງຈີກເປັນສອງຕ່ອນຕັ້ງແຕ່ເທິງຈົນເຖິງລຸ່ມ"

ນີ້ສະແດງໃຫ້ເຫັນວ່າປະຊາຊົນອິດສະລາເອນບໍ່ຕ້ອງການຖະຫວາຍຂອງບູຊາອີກຕໍ່ໄປເພື່ອສະແດງໃຫ້ເຫັນເຖິງຄວາມເຊື່ອໃນການສະເດັດມາຂອງພະຜູ້ຊ່ອຍໃຫ້ລອດ ເພາະພະຜູ້ຊ່ອຍໃຫ້ລອດຜູ້ເປັນລູກແກະຕົວຈິງໄດ້ຖືກຖະຫວາຍບູຊາທີ່ຄາວາຣີແລ້ວ. ຂອງຖະຫວາຍຕ່າງໆທີ່ເຂົາເຄີຍຖະ-ຫວາຍບໍ່ຈຳເປັນຈະຕ້ອງມີອີກຕໍ່ໄປແລ້ວ. ອັກຄະສາວົກໂປໂລໄດ້ສຶກສາຄຳພະຍາກອນໃນພະຄຳພີເກົ່າ ທ່ານໄດ້ລວບລວມຫລາຍຄົນທີ່ເຫັນການສິ້ນພະຊົນຂອງພະເຍຊູ ແລະທ່ານກໍໄດ້ຂຽນເຖິງຕີໂມທຽວຜູ້ຕິຕາມລາວວ່າພະຄຣິດເປັນຫລາຍກວ່າມະນຸດທຳມະດາ.

(1 ຕີໂມທຽວ 3:16) ທ່ານໄດ້ກ່າວວ່າ "...ພຣະອົງຊົງປາກົດມີສະພາບເປັນມະນຸດ ພຣະວິນຍານໄດ້ຊົງປະກາດວ່າຊົງເປັນຜູ້ຊອບທັມ ຝູງເທວະດາກໍໄດ້ເຫັນ ມີຜູ້ປະກາດພຣະອົງແກ່ພວກຕ່າງຊາດ ມີຊາວໂລກໄດ້ເຊື່ອຖືພຣະອົງ ພຣະອົງຊົງຖືກຮັບຂຶ້ນເມື່ອສູ່ພຣະຣັສມີ"

ຄຳພະຍາກອນທີ່ກ່ຽວເນື່ອງເຖິງການສະເຫລີມສະຫລອງປັດສະຄາ (ຜ່ານໄປຫລືລະເວັ້ນໄປ)ໄດ້ບອກເຖິງຊົ່ວໂມງ, ວັນ ແລະປີທີ່ພະຄຣິດຜູ້ເປັນແກະແຫ່ງການລະເວັ້ນຈະສິ້ນພະຊົນ. ບໍ່ມີຜູ້ອື່ນໃດອີກແລ້ວທີ່ສາມາດເຮັດໃຫ້ຄຳພະຍາກອນກ່ຽວກັບການສະເດັດກັບມາຂອງພະເມຊີຢາຫລືພະຜູ້ຊ່ອຍໃຫ້ລອດແລະສິ່ງຕ່າງໆທີ່ພະອົງຈະຕ້ອງໄດ້ກະທຳນີ້ສະເລັດ. ພະເຍຊູໄດ້ຖືກຄຶງທີ່ໄມ້ກາງແຂນໃນເວລາດຽວກັນກັບແກະໃນເທດສະການປັດສະຄາຈະຕ້ອງຖືກຂ້າ ນັ້ນຄືບ່າຍ 3 ໂມງຂອງວັນທີ 14ຂອງເດືອນທຳອິດໃນປີ ຄ.ສ. 31

ບໍ່ແມ່ນມີພຽງແຕ່ຄຳພະຍາກອນແຫ່ງການເວລາເທົ່ານັ້ນທີ່ເຮັດໃຫ້ເຮົາຮູ້ວ່າພະຄຣິດຄືລູກແກະຂອງພະເຈົ້າທີ່ແທ້ຈິງ ນັ້ນຄືພະຜູ້ຊ່ອຍໃຫ້ລອດໃນພະສັນຍາ. ຕອນທີ່ພະເຢຊູໄດ້ພົບສາວົກສອງຄົນຂອງພະອົງທີ່ທົ່ນທາງໄປໝູ່ບ້ານ ເອມມາອູດ(Emmaus)ໃນວັນອາທິດກາງຄືນຫລັງຈາກທີ່ພະອົງໄດ້ເປັນຂຶ້ນມາ, ພະຄຳພີໄດ້ກ່າວວ່າພະອົງໄດ້ເອົາພະຄຳພີໃຫ້ພວກເຂົາສຶກສາເຖິງຄຳພະຍາກອນທີ່ໄດ້ຖືກເຮັດໃຫ້ສຳເລັດໃນສອງສາມວັນທີ່ຜ່ານມາທີ່ກ່ຽວຂ້ອງກັບພະຊົນຂອງພະອົງ.

(ລູກາ 24:25,27) ພະອົງໄດ້ກ່າວວ່າ "ໂອ ຄົນໂງ່, ຜູ້ມີໃຈເສີຍຊ້າໃນການເຊື່ອບັນດາຖ້ອຍຄຳຊຶ່ງພວກຜູ້ປະກາດພຣະທັມໄດ້ກ່າວໄວ້ນັ້ນ ພຣະອົງຈຶ່ງຊົງອະທິບາຍພຣະຄັມພີທັງຫມົດທີ່ກ່ຽວກັບພຣະອົງເອງໃຫ້ເຂົາຟັງ ຕັ້ງແຕ່ໂມເຊແລະບັນດາຜູ້ປະກາດພຣະທັມ"

ໃນສັດຕະວັດທຳອິດໄດ້ມີພະຄຣິດທຽມເທັດຫລາຍຄົນມາອ້າງວ່າເປັນພະຜູ້ຊ່ອຍໃຫ້ລອດ. ໃຫ້ມາເບິ່ງຫລັກຖານນຳກັນທີພິສູດວ່າພະອົງຄືພະຜູ້ຊ່ອຍໃຫ້ລອດ:

ການປະສູດອັນມະຫັດສະຈັນຂອງພະອົງ: 700 ປີກ່ອນພະເຢຊູບັງເກີດ, ເອຊາຢາໄດ້ຂຽນວ່າ (ເອຊາຢາ 7:14) "ຄືຍິງສາວຜູ້ນຶ່ງຈະຖືພາ ແລະອອກບຸດມາເປັນຊາຍ ນາງຈະຕັ້ງຊື່ໃຫ້ບຸດນີ້ວ່າ 'ເອມານູເອນ'"

ທ່ານມັດທາຍໄດ້ຂຽນວ່າ: (ມັດທາຍ 1:18) " ຄືນາງມາຣີອາຜູ້ເປັນມານດາຂອງພຣະເຢຊູນັ້ນ ໄດ້ເປັນຄູ່ຫມັ້ນກັບໂຢເຊບແລ້ວ ກ່ອນເວລາເຂົາໄດ້ເປັນຄູ່ຜົວເມັຽກັນກໍປາກົດວ່າ ນາງມີທ້ອງແລ້ວດ້ວຍຣິດເດດພຣະວິນຍານບໍຣິສຸດ."

ສະຖານທີ່ບັງເກີດຂອງພະອົງ: ຫລາຍສັດຕະວັດກ່ອນພະຄຣິດມາບັງເກີດ, ຜູ້ພະຍາກອນມີກາໄດ້ຂຽນວ່າ: (ມີກາ 5:2) "ເບັດເລເຮັມ ...(ຈາກເຈົ້າ)ເຮົາຈະແຕ່ງໃຫ້ມີຜູ້ນຶ່ງມາປົກຄອງພວກອິສຣາເອນ". ທ່ານມັດທາຍໄດ້ຂຽນວ່າ: (ມັດທາຍ 2:1) "...ພຣະເຢຊູຊົງປະສຸດຢູ່ບ້ານເບດເລເຮັມແຂວງຢູດາຍ..."

ການທີ່ພະອົງຖືກທໍລະຍົດ: (ເພງສັຣເສີນ 41:9) "ແມ້ວ່າຫມູ່ເພື່ອນໃນເອີກຂອງຂ້າພຣະອົງ ຜູ້ຊຶ່ງຂ້າພຣະອົງໄວ້ວາງໃຈ ຜູ້ຮັບປະທານອາຫານຂອງຂ້າພຣະອົງກໍຍົກສົ້ນຕີນໃສ່ຂ້າພຣະອົງ" ເມື່ອເປໂຕຖາມພະເຢຊູວ່າໃຜຈະທໍລະຍົດພະອົງ, ພະອົງໄດ້ຕອບວ່າ (ໂຢຮັນ 13:26) "ເຮົາຈະເອົາອາ-ຫານຄຳນີ້ຈ້ຳແລ້ວຍື່ນໃຫ້ຜູ້ໃດ ກໍແມ່ນຜູ້ນັ້ນແຫລະ"

ຄ່າຈ້າງທີ່ຜູ້ທໍລະຍົດໄດ້ຮັບ: (ເຊຄາຣີຢາ 11:12) "...ແລ້ວເຂົາກໍຊັ່ງເງິນສາມສິບເຊເກລອອກໃຫ້ແກ່ຂ້າພະເຈົ້າເປັນຄ່າຈ້າງ" ຂໍ້ນີ້ໃນສະບັບພາສາອັງກິດເຂົາໄດ້ຂຽນວ່າ "...ເຂົາໄດ້ຈ່າຍໃຫ້ຂ້າ-ພະເຈົ້າ 30 ຫລຽນເງິນ" (ມັດທາຍ 26:14-15) "ເມື່ອນັ້ນຜູ້ນຶ່ງໃນພວກສິບສອງຄົນນັ້ນຊື່ຢູດາອິສະກາຣີອົດ ໄດ້ໄປຫາພວກປະໂຣຫິດຕົນໃຫຍ່ ຖາມວ່າ, 'ພວກທ່ານຈະຍອມໃຫ້ອັນໃດແກ່ຂ້າພະ-ເຈົ້າ ສ່ວນຂ້າພະເຈົ້າຈະມອບພຣະອົງໃຫ້ແກ່ພວກທ່ານ' ເຂົາຈຶ່ງເອົາເງິນສາມສິບຫລຽນໃຫ້ແກ່ຢູດາ"

ການທີ່ພະອົງຊົງຖືກເຂົາຂ້ຽນຕີທາລຸນ.(ເອຊາຢາ 50:6) "ຂ້າພະເຈົ້າຫັນຫລັງໃຫ້ແກ່ຜູ້ທີ່ໂບຍຕີຂ້າ-ພະເຈົ້າ ແລະຫັນແກ້ມໃຫ້ແກ່ຄົນທີ່ດຶງຫນວດຂ້າພະເຈົ້າອອກ ຂ້າພະເຈົ້າບໍ່ຫນີຫນ້າຈາກຄວາມອາຍແກ່ການຖົ່ມນໍ້າລາຍໃສ່" (ມັດທາຍ 26:67) "ແລ້ວເຂົາໄດ້ຖົ່ມນໍ້າລາຍໃສ່ພຣະພັກທັງທຸບຕີພຣະອົງ ແລະລາງຄົນໄດ້ເອົາມືຕົບພຣະອົງ" ມັດທາຍ 26:67

ຮອຍຕະປູຕອນທີ່ມືແລະເທົ້າຂອງພະອົງ:(ເພງສັຣເສີນ 22:16) "...ພວກມັນກັດຈີກມືຕີນຂອງຂ້າພຣະອົງ" (ໂຢຮັນ 20:25) ອັກຄະສາວົກໂທມາໄດ້ກ່າວກ່ຽວກັບການເປັນຄືນມາຂອງພະເຍຊູວ່າ "ຖ້າຂ້ອຍບໍ່ເຫັນຮອຍຕະປູທີ່ຝ່າພຣະຫັດ ແລະບໍ່ໄດ້ເອົານິ້ວມືຂອງຂ້ອຍແປະໃສ່ຮອຍຕະປູນັ້ນ ແລະບໍ່ໄດ້ເອົາມືຂອງຂ້ອຍແປະໃສ່ຂ້າງຂອງທ່ານແລ້ວ ຂ້ອຍຈະບໍ່ເຊື່ອ"

ພະອົງຖືກຈັດໃນຈໍາພວກອາດຊະຍາກອນ: (ເອຊາຢາ 53:12) ເອຊາຢາໄດ້ພະຍາກອນໄວ້ວ່າໃນຕອນທີ່ພະຜູ້ຊ່ອຍໃຫ້ລອດສິ້ນພະຊົນ ພະອົງຈະ "ມີສ່ວນຮ່ວມຢູ່ນໍາພວກອາດຊະຍາກອນ"
ຂໍ້ນີ້ໃນພະຄໍາພີລາວເຂົາໄດ້ໃຊ້ຄໍາວ່າ "ອາດຊະຍາກອນ" ໃນພະຄໍາພີພາສາອັງກິດເຂົາໄດ້ໃຊ້ຄໍາວ່າ transgressors ເຊິ່ງສາມາດແປວ່າ "ຄົນລ່ວງລະເມີດ"

ທ່ານມາຣະໂກໄດ້ກ່າວວ່າ (ມາຣະໂກ 15:27,28) "ເຂົາໄດ້ເອົາໂຈນສອງຄົນຄຶງໄວ້ພ້ອມກັບພຣະອົງ ເບື້ອງຂວາຄົນນຶ່ງ ເບື້ອງຊ້າຍຄົນນຶ່ງ ນັ້ນກໍເປັນຈິງຕາມພະຄໍາທີ່ກ່າວວ່າພະອົງຈະຕ້ອງຈັດດໃນຈໍາພວກຄົນລ່ວງລະເມີດ." (ແປມາຈາກພະຄໍາພີພາສາອັງກິດ ມາຣະໂກ 15:27,28)

ພວກເຂົາຈົກສະຫລາກແບ່ງປັນເສື້ອຜ້າຂອງພະອົງ: ກະສັດດາວິດໄດ້ບອກເຖິງວ່າຈະມີຫຍັງເກີດຂຶ້ນກັບເສື້ອຜ້າຂອງພະຜູ້ຊ່ອຍໃຫ້ລອດໜຶ່ງພັນປີກ່ອນພະເຍຊູສິ້ນພະຊົນ (ເພງສັຣເສີນ 22:18) "ພວກມັນເອົາເສື້ອຜ້າຂອງຂ້າພຣະອົງມາແບ່ງປັນກັນ ແລະເອົາເສື້ອຄຸມຂອງຂ້າພຣະອົງມາຈົກ

ສະຫລາກກັນ" ໂຢຮັນ ຜູ້ເຫັນເຫດການໄດ້ກ່າວກ່ຽວກັບສິ່ງທີ່ເກີດຂຶ້ນວ່າ: (ໂຢຮັນ 19:23,24) "...ເຂົາໄດ້ເອົາເຄື່ອງທົງຂອງພຣະອົງມາແບ່ງເປັນສີ່ພູດ ແລ້ວກໍປັນກັນຜູ້ລະພູດ ແລະຍັງເອົາສລອງຊັ້ນໃນຂອງພຣະອົງຊຶ່ງບໍ່ມີດູກ ແຕ່ແລ້ວດ້ວຍຜ້າທີ່ຕໍ່າທັງຜືນ ເຂົາຈຶ່ງເວົ້າກັນວ່າ, "ພວກເຮົາຢ່າຈີກປັນກັນເທາະ ແຕ່ໃຫ້ຈັກສລາກເອົາ ເພື່ອຈະໄດ້ຮູ້ວ່າເປັນຂອງຜູ້ໃດ" ທັງນີ້ເພື່ອໃຫ້ສໍາເຣັດຕາມພຣະຄັມພີທີ່ຂຽນໄວ້ວ່າ, "ເສື້ອຜ້າຂອງຂ້າພຣະອົງເຂົາໄດ້ແບ່ງປັນກັນ ສ່ວນເສື້ອຂອງພຣະອົງນັ້ນເຂົາກໍຈັກສລາກກັນ"

ຄໍາຕັດ(ເວົ້າ)ຂອງພະອົງທີ່ໄມ້ກາງແຂນ: (ເພາງສັຣເສີນ 22:1) ພະຄໍາຄໍາພີເກົ່າໄດ້ທໍານາຍເຖິງຄໍາຖ້ອຍຄໍາທີ່ພະຜູ້ຊ່ອຍໃຫ້ລອດຈະກ່າວອອກມາຈາກຄວາມທໍລະມານຂອງພະອົງວ່າ "ພຣະເຈົ້າຂອງຂ້າພຣະອົງ ພຣະເຈົ້າຂອງຂ້າພຣະອົງ ເຫດໃດພຣະອົງຈຶ່ງໄດ້ຊົງປະປ່ອຍຂ້າພຣະອົງ?" ມັດທາຍ 27:46 ໄດ້ກ່າວວ່າ "ພຣະເຈົ້າຂອງຂ້າພຣະອົງ, ພຣະເຈົ້າຂອງຂ້າພຣະອົງເອີຍ, ເຫດສັນໃດຈຶ່ງຊົງປະຖິ້ມຂ້າພຣະອົງເສັຽ" ຄໍາວ່າ "ປ່ອຍປະ" ແລະ "ປະຖິ້ມ" ໃນພາສາອັງກິດແມ່ນຄໍາດຽວກັນ ນັ້ນຄື forsake ພະເຍຊູຕັດຄໍານີ້ອອກມາກ່ອນທີ່ພະອົງສິ້ນພະຊົນໃນເວລາ 9 ໂມງ.

ຄໍາພະຍາກອນຫລາຍຄໍາກ່ຽວກັບພະຜູ້ຊ່ອຍໃຫ້ລອດແມ່ນຢູ່ເໜືອການຄວບຄຸ່ມຂອງພະເຍຊູ ຕົວຢ່າງເຊັ່ນ, ພະອົງບໍ່ສາມາດຈັດຕຽມທີ່ປະສູດແລະລັກສະນະການປະສູດຂອງພະອົງ, ພະອົງບໍ່ສາມາດຈັດຕຽມຄົນທີ່ຈະມາທໍລະຍົດພະອົງ ແລະພະອົງກໍບໍ່ສາມາດຈັດຕຽມເຫດການຕ່າງໆທີ່ເກີດຂຶ້ນໃນວັນພະອົງສິ້ນພະຊົນ.

ແມ່ນແລ້ວ ພະເຍຊູເປັນຜູ້ທີ່ພະອົງອ້າງວ່າພະອົງເປັນ ນັ້ນຄືພະເມຊີຢາ ຫລື ພະຜູ້ຊ່ອຍໃຫ້ລອດ! ພີ່ນ້ອງທີ່ຮັກ ພະເຈົ້າຂອງເຮົາໄດ້ຖືກຕຶງທີ່ໄມ້ກາງແຂນຢ່າງທໍລະມານ ຫລັງຂອງພະອົງເຕັມໄປດ້ວຍບາດແຜຈາກການຂ້ຽນຕີ ມືແລະເທົ້າຂອງພະອົງຖືກຕະປູຕອກ ສີສະຂອງພະອົງຖືກໜາມແທງ ພະອົງຖືກເຂົາເວົ້າລົບລູ່ເຍາະເຍີ້ຍ. ຖ້າພະອົງຢາກຈະຮ້ອງທູດສະຫວັນໃຫ້ມາຊ່ອຍພະອົງແລະທໍາລາຍໂລກນີ້ຖິ້ມພະອົງກໍສາມາດເຮັດໄດ້ ແຕ່ຖ້າພະອົງເຮັດແນວນັ້ນພະອົງກໍບໍ່ສາມາດຊ່ອຍເຮົາໃຫ້ພົ້ນໄດ້

ບາງຄັ້ງບາງເວລາ ພີ່ນ້ອງເຄີຍຄິດຢ່າງນີ້ບໍ່ "ມີໃຜບໍ່ນໍ້ທີ່ເປັນຫ່ວງຂ້ອຍແທ້?" ຢາກບອກພີ່ນ້ອງວ່າພະເຍຊູເປັນຫ່ວງພີ່ນ້ອງແທ້! ນານມາແລ້ວ ພະອົງໄດ້ພິສູດໃຫ້ເຫັນເຖິງຄວາມຫ່ວງໄຍທີ່ພະອົງມີຕໍ່ເຮົາ ໂດຍການທີ່ພະອົງໄດ້ສະຫລະພະຊົນຂອງພະອົງຖືກຕຶງທີ່ພູເຂົານອກເມືອງເຢຣູຊາເລັມ!

ຊ່າງເປັນຄວາມຮັກທີ່ວິເສດແທ້! ຄວາມຮັກນີ້ໄດ້ເຮັດໃຫ້ຈິດໃຈອັນທໍລະນົງເປັນຈິດໃຈທີ່ອ່ອນນ້ອມຖ່ອມໂຕ! ຖ້າພະອົງຢາກຈະຮ້ອງທູດສະຫວັນເປັນພັນໆອົງມາຊ່ອຍພະອົງກໍໄດ້ ແຕ່ຂອບຄຸນພະເຈົ້າທີ່ພະອົງບໍ່ຮ້ອງ ແລະກໍຍອມຕາຍເພື່ອພີ່ນ້ອງແລະເພື່ອຂ້າພະເຈົ້າ!

(ຄໍາເຊີນຊວນ)
ຂໍເຊີນຊວນໃຫ້ພີ່ນ້ອງຍົກມືຂວາຂຶ້ນແລະກ່າວວ່າ, “ພະເຍຊູ ຂ້າພະອົງຂໍຍອມຮັບເອົາພະອົງໃຫ້ເປັນພະເຈົ້າແລະພະຜູ້ຊ່ອຍໃຫ້ລອດຂອງຂ້າພະອົງນັບຕັ້ງແຕ່ດຽວນີ້ໄປ. ຂ້າພະອົງເຊື່ອວ່າ ພະອົງໄດ້ຕາຍເພື່ອຂ້າພະອົງ. ຂ້າພະອົງຂໍຖະຫວາຍຊີວິດໃຫ້ພະອົງ.”
ຂໍໃຫ້ເຮົາທຸກຄົນຍົກມືຂວາຂຶ້ນແລ້ວຂ້າພະອົງຈະອະທິຖານ.